ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ແຂວງຫຼວງນ້ຳທາ

ເລກທີ 398..../ຈຂ

ຫຼວງນ້ຳທາ, ວັນທີ 29 ມິຖຸນາ 2016.

# ຂໍ້ຕົກລົງ

## ຂອງເຈົ້າແຂວງ

## ວ່າດ້ວຍການຢຸດຕິການຂຸດຄົ້ນໄມ້ ຢູ່ແຂວງຫຼວງນ້ຳທາ

- **ອີງຕາມ:** ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີສະບັບເລກທີ 15/ນຍ, ລົງວັນທີ 13/05/2016.
- **ອີງຕາມ:** ບົດລາຍງານຂອງຄະນະທີມງານກວດກາ, ກົມກວດກາປ່າໄມ້ ຂອງກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 22/06/2016.

**ເຈົ້າແຂວງຫຼວງນ້ຳທາ ຕົກລົງ:**

**ມາດຕາ 1:** ເຫັນດີລົບລ້າງ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການແບ່ງປັນການຂຸດຄົ້ນໄມ້ປະຈຳສົກປີ 2013-2014 ສະບັບເລກທີ 395/ຈຂ, ລົງວັນທີ 04/7/2012 ແລະ ແຈ້ງການຂອງຫ້ອງວ່າການປົກຄອງແຂວງກ່ຽວກັບການເສຍຄ່າພັດທະໄມ້ ສະບັບເລກທີ 482/ຫປຂ, ລົງວັນທີ 17/11/2014, ສ່ວນໄມ້ທີ່ຍັງຄ້າງຈັດຕັ້ງປະຕິບັດ ຈຳນວນ 147,335 ແມັດກ້ອນແມ່ນຫ້າມບໍ່ໃຫ້ຂຸດຄົ້ນຕໍ່ ຢ່າງເດັດຂາດ.

**ມາດຕາ2:** ຫ້າມບໍ່ໃຫ້ຂຸດຄົ້ນ, ເຄື່ອນຍ້າຍໄມ້ ແລະ ອະນຸຍາດສົ່ງອອກໄມ້ທີ່ບໍ່ຖືກຕ້ອງຕາມລະບຽບການ ຢ່າງເດັດຂາດ.

**ມາດຕາ 3:** ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 4:** ສອງກອງບັນຊາການ, ບັນດາເມືອງ, ພະແນກກະສິກຳ ແລະ ປ່າໄມ້, ພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາຫົວໜ່ວຍທຸລະກິດກ່ຽວກັບໄມ້ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງຫຼວງນ້ຳທາ**

ບຸນຍີ ແກ້ວຄູນເມືອງ

Bounyi KEOKHUONMUONG

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ເຈົ້າແຂວງ, ຮອງເຈົ້າແຂວງ ທ່ານລະ | 01 ສ/ບ. |
| - ພະແນກກະສິກຳ | 01 ສ/ບ. |
| - ບັນດາເມືອງ | 01 ສ/ບ. |
| - ພາກສ່ວນທີ່ກ່ຽວຂ້ອງ | 01 ສ/ບ. |
| - ສຳເນົາ | 02 ສ/ບ. |